ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນສູງສຸດ ເລກທີ 01 /ສປສ

# ມະຕິຕົກລົງ

ຂອງ

ສະພາປະຊາຊົນສູງສຸດ ແຫ່ງ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ກ່ຽວກັບການຮັບຮອງເອົາລັດຖະທຳມະນູນ ແຫ່ງ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ພາຍຫລັງໄດ້ຄົ້ນຄ້ວາອະພິປາຍຢ່າງກວ້າງຂວາງ ແລະ ເລິກເຊິ່ງເນື້ອໃນລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວທີ່ສະເໜີໂດຍ ທ່ານປະທານຄະນະກຳມະການຮ່າງລັດຖະທຳມະນູນ.

ກອງປະຊຸມຄັ້ງທີ 6 ສະໄໝສາມັນຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນວາລະປະຊຸມຕອນບ່າຍ ວັນພຸດທີ 14 ສິງຫາ 1991.

ຕົກລົງ

ມາດຕາ 1. ຮັບຮອງເອົາລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໂດຍຄະແນນສຽງເປັນເອກະສັນ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ໄດ້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 14 ສິງຫາ 1991

ປະທານສະພາປະຊາຊົນສູງສຸດ

ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ່ 55 /ປທປທ

ລົງວັນທີ່ 15/8/91

# ລັດຖະດຳລັດ

ຂອງປະທານປະເທດ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ກ່ຽວກັບການປະກາດໃຊ້ລັດຖະທຳມະນູນແຫ່ງ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

– ອີງຕາມມະຕິຂອງກອງປະຊຸມຜູ້ແທນທົ່ວປະເທດ ຄັ້ງວັນທີ 2 ທັນວາ 1975 ວ່າດ້ວຍການແຕ່ງຕັ້ງປະທານປະເທດ.

– ອີງຕາມກົດໝາຍວ່າດ້ວຍສະພາປະຊາຊົນສູງສຸດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສປສ, ລົງວັນທີ 19 ເມສາ 1988.

– ອີງຕາມມະຕິຕົກລົງຂອງກອງປະຊຸມ ຄັ້ງທີ 6 ສະໄໝສາມັນຂອງສະພາປະຊາຊົນສູງສຸດ ຊຸດທີ II ກ່ຽວກັບການຮັບຮອງເອົາລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ສະບັບເລກທີ 07/ສປສ ລົງວັນທີ 14 ສິງຫາ 1991.

ປະທານປະເທດ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ໄດ້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ສິງຫາ 1991.

ຜູ້ວ່າກ[illegible]ານປະເທດ

ພູມີ ວົງວິຈິດ

໑

# ໝວດທີ I

# ລະບອບການເມືອງ

**ມາດຕາ 1.** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ເປັນປະເທດເອກະລາດ, ມີອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ; ເປັນປະເທດເອກະພາບຂອງທຸກຊົນເຜົ່າ ທີ່ຕັດແຍກອອກຈາກ ກັນບໍ່ໄດ້.

**ມາດຕາ 2.** ລັດແຫ່ງ ສາທາລະນະລັດປະຊາທິປະໄຕປະ ຊາຊົນລາວ ແມ່ນລັດປະຊາທິປະໄຕປະຊາຊົນ. ອຳນາດທັງ ໝົດ ເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະ ໂຫຍດ ຂອງປະຊາຊົນບັນດາເຜົ່າ ເຊິ່ງປະກອບດ້ວຍບັນດາ ຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ ປັນຍາຊົນເປັນຫລັກແຫລ່ງ.

**ມາດຕາ 3.** ສິດເປັນເຈົ້າປະເທດຊາດ ຂອງປະຊາຊົນ ບັນ ດາເຜົ່າໄດ້ຮັບການປະຕິບັດ ແລະ ຮັບປະກັນດ້ວຍການ ເຄື່ອນໄຫວຂອງລະບົບການເມືອງ ເຊິ່ງມີພັກປະຊາຊົນປະຕິ ວັດລາວເປັນແກ່ນນຳ.

**ມາດຕາ 4.** ສະພາແຫ່ງຊາດ ແມ່ນອົງການຕົວແທນ

ຂອງປະຊາຊົນ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແມ່ນປະຕິບັດຕາມຫລັກການທົ່ວໄປ, ສະເໝີພາບ, ໂດຍກົງ ແລະ ລົງຄະແນນສຽງປິດລັບ.

ຜູ້ປ່ອນບັດເລືອກຕັ້ງມີສິດສະເໜີປົດຜູ້ແທນຂອງຕົນໄດ້ຖ້າ ຫາກເຫັນວ່າ ມີການປະພຶດຕົນ ບໍ່ສົມກຽດສັກສີ ແລະ ຂາດ ຄວາມໄວ້ວາງໃຈຈາກປະຊາຊົນ.

**ມາດຕາ 5.** ສະພາແຫ່ງຊາດ ແລະ ທຸກອົງການຂອງລັດ ໄດ້ຮັບການຈັດຕັ້ງ ແລະ ເຄື່ອນໄຫວ ຕາມຫລັກການ ລວມ ສູນປະຊາທິປະໄຕ.

**ມາດຕາ 6.** ລັດປົກປ້ອງສິດອິດສະລະພາບ ແລະ ສິດ ປະຊາທິປະໄຕ ຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດ ຕ້ອງໂຄສະນາອົບຮົມ ບັນດານະໂຍບາຍ ແລະ ລະບຽບກົດໝາຍໃຫ້ປະຊາຊົນ ແລະ ພ້ອມກັນຈັດຕັ້ງປະຕິບັດ ເພື່ອຮັບປະກັນສິດ ແລະ ຜົນປະ ໂຫຍດອັນຊອບທຳຂອງປະຊາຊົນ. ຫ້າມທຸກການກະທຳແບບ ອານາສິດ, ຂົ່ມຂູ່ອັນຈະກໍ່ຄວາມເສຍຫາຍ ເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດຂອງປະຊາຊົນ.

**ມາດຕາ 7.** ແນວລາວສ້າງຊາດ, ສະຫະພັນກຳມະ ບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະ ພັນແມ່ຍິງລາວ ແລະ ບັນດາອົງການຈັດຕັ້ງສັງຄົມເປັນບ່ອນ

ເຕົ້າໂຮມຄວາມສາມັກຄີ ແລະ ບຸກລະດົມບັນດາຊັ້ນຄົນ ຂອງທຸກຊົນເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ.

**ມາດຕາ 8.** ລັດປະຕິບັດນະໂຍບາຍສາມັກຄີ ແລະ ສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງຕົນ ແລະ ຂອງຊາດ. ຫ້າມທຸກການກະທໍາແບ່ງແຍກ ແລະ ການປະພຶດຈໍາແນກລະຫວ່າງຊົນເຜົ່າ.

ລັດປະຕິບັດທຸກມາດຕະການ ເພື່ອຂະຫຍາຍ ແລະ ຍົກລະດັບເສດຖະກິດ–ສັງຄົມຂອງທຸກຊົນເຜົ່າໃຫ້ສູງຂຶ້ນເລື້ອຍໆ.

**ມາດຕາ 9.** ລັດເຄົາລົບ ແລະ ປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະນິກະຊົນ ແລະ ສາສະນິກະຊົນອື່ນ. ບຸກລະດົມສົ່ງເສີມພະພິກຂຸ ສາມະເນນ ແລະ ນັກບວດ ຂອງສາສະໜາອື່ນໆ ໃຫ້ເຂົ້າຮ່ວມ ໃນການເຄື່ອນໄຫວ ທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ. ຫ້າມທຸກການກະທໍາທີ່ເປັນການແບ່ງແຍກ ສາສະໜາ ແລະ ແບ່ງແຍກປະຊາຊົນ.

**ມາດຕາ 10.** ລັດຄຸ້ມຄອງສັງຄົມດ້ວຍລັດຖະທໍາມະນູນ

ແລະ ກົດໝາຍ. ທຸກອົງການຈັດຕັ້ງຂອງພັກ ແລະ ລັດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄື່ອນໄຫວຢູ່ໃນຂອບເຂດ ຂອງລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 11.** ລັດປະຕິບັດນະໂຍບາຍ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະ ຮອບດ້ານ.

ກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ ຕ້ອງເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ; ປະຕິບັດໜ້າທີ່ປົກປັກຮັກສາໝາກຜົນຂອງການປະຕິວັດ, ປົກປັກຮັກສາຊີວິດ, ຊັບສິນ ແລະ ການອອກແຮງງານຂອງປະຊາຊົນ; ຕ້ອງປະກອບສ່ວນເຂົ້າໃນພາລະກິດ ພັດທະນາປະເທດຊາດ.

**ມາດຕາ 12.** ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ ບົນຫລັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະໜັບສະ

ໝູນການຕໍ່ສູ້ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າ ທາງສັງຄົມ.

## ໝວດທີ II
## ລະບອບເສດຖະກິດ ແລະ ສັງຄົມ

**ມາດຕາ 13.** ລະບອບເສດຖະກິດ ຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນເສດຖະກິດຫລາຍພາກສ່ວນທີ່ມີຈຸດໝາຍຂະຫຍາຍການຜະລິດ ແລະ ເປີດກ້ວາງການຈະລາຈອນ, ຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ເຮັດໃຫ້ພື້ນຖານເສດຖະກິດແຫ່ງຊາດມີການຂະຫຍາຍຕົວຍິ່ງຂຶ້ນ ແລະ ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ສູງຂຶ້ນເລື້ອຍໆ.

**ມາດຕາ 14.** ລັດປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງລັດ, ລວມໝູ່, ເອກະເທດ, ກຳມະສິດເອກະຊົນຂອງນາຍທຶນພາຍໃນປະເທດ ແລະ ກຳມະສິດຂອງຊາວຕ່າງປະເທດ ທີ່ມາລົງທຶນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ລັດສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດແຂ່ງຂັນ ແລະ

ຮ່ວມມືກັບຂະຫຍາຍການຜະລິດ ແລະ ທຸລະກິດ. ທຸກພາກສ່ວນເສດຖະກິດລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 15.** ລັດປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໂອນ) ແລະ ສິດສືບທອດຊັບສົມບັດຂອງ ການຈັດຕັ້ງ ແລະ ບຸກຄົນ. ສຳລັບທີ່ດິນ ທີ່ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດນັ້ນ, ລັດຮັບປະກັນສິດນຳໃຊ້, ສິດໂອນ ແລະ ສິດສືບທອດຕາມກົດໝາຍ.

**ມາດຕາ 16.** ການຄຸ້ມຄອງເສດຖະກິດ ແມ່ນປະຕິບັດຕາມກົນໄກເສດຖະກິດຕະຫລາດ ທີ່ມີການດັດສົມຂອງລັດ, ປະຕິບັດຫລັກການສົມທົບ ການຄຸ້ມຄອງລວມສູນເປັນເອກະພາບ ຂອງຂະແໜງການສູນກາງ ກັບການແບ່ງຄວາມຮັບຜິດຊອບຄຸ້ມຄອງໃຫ້ທ້ອງຖິ່ນຢ່າງສົມເຫດສົມຜົນ.

**ມາດຕາ 17.** ທຸກອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາສິ່ງແວດລ້ອມ, ປົກປັກຮັກສາຊັບພະຍາກອນ ທຳມະຊາດ: ໜ້າດິນ, ພື້ນດິນ, ປ່າໄມ້, ສັດ, ແຫລ່ງນ້ຳ ແລະ ອາກາດ.

**ມາດຕາ 18.** ລັດສົ່ງເສີມ ແລະ ແນະນຳການຂະຫຍາຍການ ພົວພັນເສດຖະກິດກັບຕ່າງປະເທດ ດ້ວຍຫລາຍຮູບການ

ບົນຫລັກການເຄົາລົບເອກະລາດ, ອະທິປະໄຕຂອງກັນ. ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 19.** ລັດເອົາໃຈໃສ່ ຂະຫຍາຍການສຶກສາ ຕິດພັນກັບການກໍ່ສ້າງຄົນຮຸ່ນໃໝ່ໃຫ້ເປັນພົນລະເມືອງດີ. ການເຄື່ອນໄຫວການສຶກສາ, ວັດທະນະທຳ ແລະ ວິທະຍາສາດແມ່ນແນໃສ່ຍົກລະດັບຄວາມຮູ້, ນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ນ້ຳໃຈສາມັກຄີປອງດອງລະຫວ່າງບັນດາເຜົ່າ, ເຊີດຊູສະຕິເປັນເຈົ້າຂອງປະເທດຊາດ. ປະຕິບັດລະບອບການສຶກສາຂັ້ນປະຖົມແບບບັງຄັບ. ລັດອະນຸຍາດໃຫ້ເປີດໂຮງຮຽນເອກະຊົນ ທີ່ເຄື່ອນໄຫວຕາມຫລັກສູດ ຂອງລັດ. ລັດ ແລະ ປະຊາຊົນສົມທົບກັນກໍ່ສ້າງໂຮງຮຽນທຸກຂັ້ນ, ເຮັດໃຫ້ການສຶກສາກາຍເປັນລະບົບທີ່ຄົບຖ້ວນ, ເອົາໃຈໃສ່ຂະຫຍາຍການສຶກສາຢູ່ເຂດຊົນເຜົ່າ.

ລັດເສີມຂະຫຍາຍວັດທະນະທຳ ທີ່ເປັນມູນເຊື້ອອັນດີງາມຂອງຊາດ ສົມທົບກັບການຮັບເອົາວັດທະນະທຳອັນກ້າວໜ້າຂອງໂລກ, ກຳຈັດທຸກປາກົດການ ທີ່ຫຍໍ້ທໍ້ທາງດ້ານແນວຄິດ ແລະ ວັດທະນະທຳ. ສົ່ງເສີມການເຄື່ອນໄຫວທາງດ້ານວັດທະນະທຳ, ສິລະປະວັນນະຄະດີ ແລະ ຖະແຫລງຂ່າວລວມທັງຢູ່ເຂດພູດອຍ. ປົກປັກຮັກສາວັດຖຸບູຮານ ແລະ ປູຊະນີຍະສະຖານຂອງຊາດ.

**ມາດຕາ 20.** ລັດເອົາໃຈໃສ່ຂະຫຍາຍສາທາລະນະສຸກ, ອະນຸຍາດໃຫ້ເອກະຊົນ ເປີດການບໍລິການທາງດ້ານການແພດ ຕາມລະບຽບການຂອງລັດ.

ລັດສົ່ງເສີມການຂະຫຍາຍການກິລາກາຍະກໍາ ແລະ ທ່ອງທ່ຽວ, ເອົາໃຈໃສ່ເບິ່ງແຍງນັກຮົບເສັຽອົງຄະ, ຄອບຄົວຂອງຜູ້ທີ່ເສັຽສະຫລະ, ຄອບຄົວຂອງຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ແລະ ພະນັກງານເບັ້ຽບໍານານ.

ລັດເອົາໃຈໃສ່ປະຕິບັດນະໂຍບາຍຕໍ່ແມ່ ແລະ ເດັກ.

## ໝວດທີ III
## ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ

**ມາດຕາ 21.** ພົນລະເມືອງລາວ ແມ່ນຜູ້ທີ່ມີສັນຊາດລາວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 22.** ພົນລະເມືອງລາວ ໂດຍບໍ່ຈໍາແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 23.** ພົນລະເມືອງລາວຜູ້ທີ່ມີອາຍຸແຕ່ສິບແປດປີຂຶ້ນໄປມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ທີ່ມີອາຍຸແຕ່ຊາວເອັດປີຂຶ້ນໄປມີສິດສະໝັກຮັບເລືອກຕັ້ງ, ເວັ້ນເສັຽແຕ່ຜູ້ເສັຽຈິດ ແລະ ຜູ້ທີ່ຖືກສານຕັດສິນປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

**ມາດຕາ 24.** ພົນລະເມືອງລາວ ຍິງຊາຍມີສິດເທົ່າທຽມກັນ ໃນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ.

**ມາດຕາ 25.** ພົນລະເມືອງລາວ ມີສິດໄດ້ຮັບການສຶກສາຮ່ຳຮຽນ.

**ມາດຕາ 26.** ພົນລະເມືອງລາວ ມີສິດທຳງານ ແລະ ປະກອບອາຊີບ ທີ່ບໍ່ຂັດກັບກົດໝາຍ. ຜູ້ອອກແຮງງານມີສິດໄດ້ພັກຜ່ອນ, ມີສິດໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ມີສິດໄດ້ຮັບການຊ່ວຍເຫລືອ ໃນກໍລະນີທີ່ໝົດຄວາມສາມາດອອກແຮງງານ, ເສັຽອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27.** ພົນລະເມືອງລາວ ມີສິດເສລີພາບໃນການຕັ້ງພູມລຳເນົາ ແລະ ໃນການໄປມາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28.** ພົນລະເມືອງລາວ ມີສິດຮ້ອງຂໍຕໍ່ວ່າ, ກ່າວຟ້ອງ ແລະ ສະເໜີຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງຂອງລັດ ກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫລື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.

ຄຳຮ້ອງຂໍຕໍ່ວ່າ, ການກ່າວຟ້ອງ ແລະ ຄວາມເຫັນຂອງພົນລະເມືອງຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 29.** ພົນລະເມືອງລາວ ມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ ທາງດ້ານຮ່າງກາຍ ແລະ ເຄຫະສະຖານ. ພົນລະເມືອງລາວ ຈະບໍ່ຖືກຈັບຕົວ ຫລື ກວດຄົ້ນຖ້າຫາກບໍ່ມີຄຳຕົກລົງ ຫລື ອະນຸມັດຂອງອົງການທີ່ມີສິດອຳນາດ, ເວັ້ນເສັຽແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 30.** ພົນລະເມືອງລາວ ມີສິດເສລີພາບ ໃນການເຊື່ອຖື ຫລື ບໍ່ເຊື່ອຖືສາສະໜາ.

**ມາດຕາ 31.** ພົນລະເມືອງລາວ ມີສິດເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ຈັດຕັ້ງສະມາຄົມ ແລະ ເດີນຂະບວນທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 32.** ພົນລະເມືອງລາວ ມີສິດເສລີພາບ ໃນການຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາ

ສາດ–ເຕັກນິກ ແລະ ເຕັກໂນໂລຢີ, ປະດິດສ້າງສິລະປະ ວັນນະຄະດີ ແລະ ດຳເນີນການເຄື່ອນໄຫວວັດທະນະທຳ ທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 33.** ລັດປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກກົດໝາຍຂອງພົນລະເມືອງລາວທີ່ຢູ່ຕ່າງປະເທດ.

**ມາດຕາ 34.** ພົນລະເມືອງລາວ ມີພັນທະເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ຂອງສັງຄົມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ.

**ມາດຕາ 35.** ພົນລະເມືອງລາວ ມີພັນທະເສັຽພາສີ ແລະ ສ່ວຍສາອາກອນຕາມລະບຽບກົດໝາຍ

**ມາດຕາ 36.** ພົນລະເມືອງລາວ ມີພັນທະປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37.** ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດກໍ່ມີສິດໄດ້ຮັບການປ້ອງກັນສິດ ແລະ ເສລີພາບຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ມີສິດຮ້ອງຟ້ອງຕໍ່ສານ ແລະ ອົງການທີ່ກ່ຽວຂ້ອງຂອງ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ມີພັນທະເຄົາລົບລັດຖະທຳມະນູນ ແລະ ລະບຽບກົດໝາຍຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

**ມາດຕາ 38.** ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອະນຸຍາດການລີ້ໄພໃຫ້ແກ່ຄົນຕ່າງປະເທດ ທີ່ຖືກປາບປາມຍ້ອນໄດ້ທຳການຕໍ່ສູ້ເພື່ອອິດສະລະພາບ, ຄວາມເປັນທຳ, ສັນຕິພາບ ແລະ ພາລະກິດວິທະຍາສາດ.

## ໝວດທີ IV
## ສະພາແຫ່ງຊາດ

**ມາດຕາ 39.** ສະພາແຫ່ງຊາດ ແມ່ນອົງການນິຕິບັນຍັດມີສິດຕົກລົງ ບັນດາບັນຫາພື້ນຖານ ຂອງ ປະເທດຊາດ, ທັງເປັນອົງການຕິດຕາມກວດກາ ການເຄື່ອນໄຫວ ຂອງອົງການບໍລິຫານ ແລະ ຕຸລາການ.

**ມາດຕາ 40.** ສະພາແຫ່ງຊາດມີສິດ ແລະ ໜ້າທີ່ດັ່ງນີ້:

1. ສ້າງ, ຮັບຮອງເອົາ ຫລື ປ່ຽນແປງລັດຖະທຳມະນູນ;

2. ພິຈາລະນາ, ຮັບຮອງເອົາ, ປ່ຽນແປງ ຫລື ລົບລ້າງກົດໝາຍ;

3. ກຳນົດ, ປ່ຽນແປງ ຫລື ລົບລ້າງພາສີ ແລະ ສ່ວຍສາອາກອນ;

4. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດ ແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ;

5. ເລືອກຕັ້ງ ຫລື ປົດຕຳແໜ່ງປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

6. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ ຫລື ການປົດຕຳແໜ່ງຄະນະລັດຖະບານ ຕາມການສະເໜີຂອງປະທານປະເທດ;

7. ເລືອກຕັ້ງ ຫລື ປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະ ອະທິໄອຍະການປະຊາຊົນຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ,

8. ຕົກລົງສ້າງຕັ້ງ ຫລື ຍຸບເລີກກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ກຳແພງນະຄອນ; ຕົກລົງເຂດແດນຂອງແຂວງ ແລະ ກຳແພງນະຄອນຕາມການສະເໜີຂອງນາຍົກລັດຖະມົນຕີ;

9. ຕົກລົງນິລະໂທດກຳ;

10. ຕົກລົງໃຫ້ສັດຕະຍາບັນ ຫລື ລົບລ້າງສົນທິສັນຍາ, ສັນຍາ ທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ ແລະ ລະ

ບຽບການສາກົນ;

11. ຕົກລົງບັນຫາສົງຄາມ ຫລື ສັນຕິພາບ;

12. ຕິດຕາມການເຄົາລົບລັດຖະທຳມະນູນ ແລະ ກົດໝາຍ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ.

**ມາດຕາ 41.** ສະມາຊິກສະພາແຫ່ງຊາດ ແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງຕາມລະບຽບການ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສະພາແຫ່ງຊາດມີອາຍຸການຫ້າປີ.

ການເລືອກຕັ້ງສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວ ຢ່າງຊ້າຫົກສິບວັນກ່ອນສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ເກີດສົງຄາມ ຫລື ດ້ວຍສາເຫດອື່ນໆ ເຊິ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນສະພາແຫ່ງຊາດອາດຈະຕໍ່ອາຍຸການຂອງຕົນກໍ່ໄດ້, ແຕ່ຕ້ອງດຳເນີນການເລືອກຕັ້ງສະພາແຫ່ງຊາດຊຸດໃໝ່ຢ່າງຊ້າບໍ່ໃຫ້ເກີນຫົກເດືອນ ພາຍຫລັງສະພາບການໄດ້ກັບຄືນສູ່ປົກກະຕິ.

**ມາດຕາ 42.** ສະພາແຫ່ງຊາດ ເລືອກຕັ້ງຄະນະປະຈຳຂອງຕົນ ເຊິ່ງປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ.

ປະທານ ແລະ ຮອງປະທານສະພາແຫ່ງຊາດ ທັງເປັນປະ

ທານ ແລະ ຮອງປະທານຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 43.** ຄະນະປະຈໍາສະພາແຫ່ງຊາດມີສິດ ແລະ ໜ້າ ທີ່ດັ່ງນີ້:

1. ກະກຽມກອງປະຊຸມສະພາແຫ່ງຊາດ ແລະ ຮັບປະກັນໃຫ້ສະພາແຫ່ງຊາດປະຕິບັດແຜນການທີ່ໄດ້ກໍານົດໄວ້ ;
2. ຕີຄວາມໝາຍ ແລະ ອະທິບາຍລັດຖະທໍາມະນູນ ແລະ ກົດໝາຍຕ່າງໆ;
3. ຕິດຕາມກວດກາການເຄື່ອນໄຫວ ຂອງບັນດາອົງການບໍລິຫານ ແລະ ອົງການຕຸລາການໃນໄລຍະເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດປະຊຸມ ;
4. ຮຽກໂຮມກອງປະຊຸມສະພາແຫ່ງຊາດ ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 44.** ສະພາແຫ່ງຊາດ ເປີດປະຊຸມ ສະໄໝສາມັນ ປີລະສອງເທື່ອ ໂດຍແມ່ນຄະນະປະຈໍາ ສະພາແຫ່ງຊາດເປັນຜູ້ ຮຽກໂຮມ.

ຄະນະປະຈໍາສະພາແຫ່ງຊາດ ອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍ່ໄດ້ ຖ້າຫາກເຫັນວ່າມີຄວາມຈໍາເປັນ.

**ມາດຕາ 45.** ກອງປະຊຸມສະພາແຫ່ງຊາດ ຈະດໍາເນີນ

ໄດ້ກໍຕໍ່ເມື່ອຫາກມີສະມາຊິກຈຳນວນຫລາຍກ່ວາເຄິ່ງໜຶ່ງຂອງ ສະມາ ຊິກສະພາແຫ່ງຊາດ ທັງໝົດທີ່ເຂົ້າຮ່ວມ.

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອຕ້ອງໄດ້ຮັບຄະແນນສຽງຫລາຍກ່ວາເຄິ່ງໜຶ່ງຂອງຈຳນວນສະມາຊິກທັງໝົດທີ່ເຂົ້າຮ່ວມກອງປະຊຸມ, ເວັ້ນເສັຽແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 54 ແລະ ມາດຕາ 80 ຂອງລັດຖະທຳມະນູນ.

**ມາດຕາ 46.** ອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດສະເໜີ ຮ່າງກົດໝາຍມີດັ່ງນີ້:

1. ປະທານປະເທດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ລັດຖະບານ;
4. ສານປະຊາຊົນສູງສຸດ;
5. ອະທິໄອຍະການປະຊາຊົນ;
6. ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.

**ມາດຕາ 47.** ກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວນັ້ນ ຕ້ອງໄດ້ປະກາດໃຊ້ ໂດຍປະທານປະເທດ ຢ່າງຊ້າບໍ່ໃຫ້ເກີນສາມສິບວັນນັບແຕ່ມື້ໄດ້ຮັບຮອງເປັນຕົ້ນໄປ. ໃນໄລຍະ ເວລາດັ່ງກ່າວນັ້ນປະທານປະເທດມີສິດສະເໜີໃຫ້ ສະພາແຫ່ງ ຊາດພິຈາລະນາຄືນໃໝ່. ກົດໝາຍທີ່ໄດ້ນຳອອກພິ

ຈາລະນາຄືນໃໝ່ນັ້ນ ຖ້າວ່າສະພາແຫ່ງຊາດຫາກຍັງຕົກລົງຢັ້ງຢືນເອົາຕາມເດີມ ແລ້ວປະທານປະເທດກໍ່ຕ້ອງປະກາດໃຊ້ພາຍໃນກຳນົດສິບຫ້າວັນ.

**ມາດຕາ 48.** ບັນດາບັນຫາທີ່ກ່ຽວພັນ ເຖິງຊາຕາກຳຂອງປະເທດຊາດ ແລະ ຜົນປະໂຫຍດອັນໃຫຍ່ຫລວງ ຂອງປະຊາຊົນ ຕ້ອງຜ່ານສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງ ຊາດໃນລະຫວ່າງສອງສະໄໝກອງປະຊຸມ ຂອງສະພາແຫ່ງຊາດ.

**ມາດຕາ 49.** ສະພາແຫ່ງຊາດສ້າງຕັ້ງ ບັນດາກຳມາທິການ ຂອງຕົນ ເຊິ່ງມີໜ້າທີ່ພິຈາລະນາຮ່າງກົດໝາຍ, ຮ່າງລັດຖະດຳລັດ ແລະ ຮ່າງລັດຖະບັນຍັດ ແລ້ວນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ; ພ້ອມທັງຊ່ວຍສະພາແຫ່ງ ຊາດ ແລະ ຄະນະປະຈຳສະພາແຫ່ງຊາດປະຕິບັດສິດກວດກາ ການເຄື່ອນໄຫວຂອງອົງການບໍລິຫານ ແລະ ອົງການຕຸລາການ.

**ມາດຕາ 50.** ສະມາຊິກສະພາແຫ່ງຊາດ ມີສິດຊັກຖາມນາຍົກລັດຖະມົນຕີ ຫລື ສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ ແລະ ອະທິບໍດີໄອຍະການປະຊາຊົນ.

ອົງການ ຫລື ບຸກຄົນທີ່ຖືກຊັກຖາມນັ້ນ ຕ້ອງຕອບຕໍ່ທີ່ປະຊຸມສະພາແຫ່ງຊາດ ດ້ວຍວາຈາ ຫລື ເປັນລາຍລັກອັກສອນ.

**ມາດຕາ 51.** ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກດຳເນີນຄະດີ ຫລື ກັກຂັງ, ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຂອງສະພາ ແຫ່ງຊາດ ຫລື ຂອງຄະນະປະຈຳສະພາແຫ່ງຊາດໃນລະຫວ່າງ ສອງສະໄໝກອງປະຊຸມຂອງສະພາແຫ່ງຊາດ.

ໃນກໍລະນີທີ່ມີການກະທຳຜິດ ເຊິ່ງໜ້າ ຫລື ຮີບດ່ວນນັ້ນ ອົງການທີ່ໄດ້ກັກຂັງສະມາຊິກສະພາແຫ່ງຊາດ ຕ້ອງລາຍງານທັນທີໃຫ້ສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດ ໃນລະຫວ່າງສອງສະໄໝກອງປະຊຸມຂອງສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງ. ການສືບສວນ, ສອບສວນບໍ່ເປັນສາເຫດພາໃຫ້ສະມາຊິກທີ່ຖືກດຳເນີນຄະດີຂາດປະຊຸມສະພາແຫ່ງຊາດ.

# ໝວດທີ V

## ປະທານປະເທດ

**ມາດຕາ 52.** ປະທານປະເທດ ເປັນປະມຸກລັດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ເປັນຜູ້ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 53.** ປະທານປະເທດ ມີສິດ ແລະ ໜ້າທີ່ດັ່ງນີ້ :

1. ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ ;
2. ອອກລັດຖະດຳລັດ ແລະ ລັດຖະບັນຍັດ ຕາມຄຳສະເໜີຂອງຄະນະປະຈຳສະພາແຫ່ງຊາດ ;
3. ແຕ່ງຕັ້ງ ຫລື ປົດຕຳແໜ່ງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ແລ້ວສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງເອົາ ;
4. ແຕ່ງຕັ້ງ, ໂຍກຍ້າຍ ຫລື ປົດຕຳແໜ່ງເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ຕາມການສະເໜີ ຂອງນາຍົກລັດຖະມົນຕີ ;
5. ຕົກລົງເລື່ອນຊັ້ນ ຫລື ປົດຊັ້ນນາຍພົນຢູ່ໃນກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບຕາມການສະເໜີ ຂອງນາຍົກລັດຖະມົນຕີ ;
6. ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ ;
7. ເປັນປະທານກອງປະຊຸມລັດຖະບານ ໃນເມື່ອເຫັນວ່າ ມີຄວາມຈຳເປັນ ;
8. ຕົກລົງປະດັບຫລຽນຄຳແຫ່ງຊາດ, ຫລຽນກຽດຕິຄຸນ, ຫລຽນໄຊ ແລະ ນາມມະຍົດສູງສຸດແຫ່ງລັດ ;
9. ຕົກລົງການອະໄພຍະໂທດ ;
10. ຕົກລົງການລະດົມພົນທົ່ວໄປ ຫລື ເປັນພາກສ່ວນ, ຕົກລົງພາວະສຸກເສີນໃນທົ່ວປະເທດ ຫລື ໃນທ້ອງຖິ່ນໃດໜຶ່ງ ;

11. ປະກາດໃຫ້ສັດຕະຍາບັນ ຫລື ລົບລ້າງສົນທິສັນຍາ, ສັນຍາທຸກສະບັບທີ່ໄດ້ເຊັນກັບຕ່າງປະເທດ ;

12. ແຕ່ງຕັ້ງຜູ້ຕາງໜ້າທີ່ມີອຳນາດເຕັມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຫລື ຮຽກກັບຄືນປະເທດ, ຮັບຮອງເອົາຜູ້ຕາງໜ້າທີ່ມີອຳນາດເຕັມຂອງຕ່າງປະເທດ ທີ່ມາປະຈຳຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54.** ປະທານປະເທດ ແມ່ນສະພາແຫ່ງຊາດເປັນຜູ້ເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງ ສອງສ່ວນສາມຂອງຈຳນວນສະມາຊິກ ສະພາແຫ່ງຊາດທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ .

ປະທານປະເທດ ມີອາຍຸການຫ້າປີ.

**ມາດຕາ 55.** ປະທານປະເທດ ອາດຈະມີຮອງປະທານເປັນຜູ້ຊ່ວຍວຽກ ແລະ ຕາງໜ້າໃຫ້ປະທານໃນເວລາຕິດຂັດ .

ຮອງປະທານປະເທດ ແມ່ນສະພາແຫ່ງຊາດເປັນຜູ້ເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງ**ຫລາຍ**ກວ່າເຄິ່ງໜຶ່ງຂອງ ຈຳນວນສະມາຊິກສະພາແຫ່ງຊາດທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ .

# ໝວດທີ VI

# ລັດຖະບານ

**ມາດຕາ 56.** ລັດຖະບານ ແມ່ນອົງການ ບໍລິຫານ ແຫ່ງລັດ.

ລັດຖະບານຄຸ້ມຄອງເປັນເອກະພາບ ການປະຕິບັດໜ້າທີ່ຂອງລັດໃນທຸກດ້ານ: ການເມືອງ, ເສດຖະກິດ, ວັດທະນະທຳ–ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ .

**ມາດຕາ 57.** ລັດຖະບານມີສິດ ແລະ ໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະມະຕິຂອງສະພາແຫ່ງຊາດ, ລັດຖະດຳລັດ ແລະ ລັດຖະບັນຍັດຂອງປະທານປະເທດ ;
2. ສະເໜີຮ່າງກົດໝາຍຕໍ່ສະພາແຫ່ງຊາດ, ຮ່າງລັດຖະດຳລັດ ແລະ ຮ່າງລັດຖະບັນຍັດຕໍ່ປະທານປະເທດ;
3. ກຳນົດ ແຜນຍຸດທະສາດ ແຫ່ງການພັດທະນາເສດຖະກິດ–ສັງຄົມ ແລະ ແຜນການງົບປະມານແຫ່ງລັດປະຈຳປີ ແລ້ວນຳສະເໜີໃຫ້ສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາ;
4. ອອກດຳລັດ, ມະຕິຕົກລົງ ກ່ຽວກັບການຄຸ້ມຄອງເສດຖະກິດ–ສັງຄົມ, ວິທະຍາສາດ–ເຕັກນິກ, ການປ້ອງກັນ

ຊາດ, ປ້ອງກັນຄວາມສະຫງົບ ແລະ ການເຄື່ອນໄຫວຕ່າງປະເທດ;

5 ຈັດຕັ້ງ, ຊີ້ນຳ ແລະ ກວດກາການເຄື່ອນໄຫວຂອງບັນດາອົງການຄຸ້ມຄອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ;

6. ຈັດຕັ້ງ ແລະ ກວດກາການເຄື່ອນໄຫວຂອງກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ;

7. ເຊັນສົນທິສັນຍາ, ສັນຍາກັບຕ່າງປະເທດ ແລະ ຊີ້ນຳການປະຕິບັດສົນທິສັນຍາ ແລະ ສັນຍາທີ່ໄດ້ເຊັນ;

8. ງົດການປະຕິບັດ ຫລື ລົບລ້າງຂໍ້ຕົກລົງ, ຄຳສັ່ງຂອງກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບກົດໝາຍ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58.** ລັດຖະບານ ປະກອບດ້ວຍນາຍົກລັດຖະມົນຕີ, ບັນດາຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ປະທານຄະນະກຳມະການທຽບເທົ່າກະຊວງ.

ລັດຖະບານມີອາຍຸການຫ້າປີ.

**ມາດຕາ 59.** ນາຍົກລັດຖະມົນຕີ ແມ່ນ ປະທານ ປະ

ເທດ ເປັນຜູ້ແຕ່ງຕັ້ງ ໂດຍການຮັບຮອງຂອງສະພາແຫ່ງຊາດ.

**ມາດຕາ 60.** ນາຍົກລັດຖະມົນຕີ ເປັນຫົວໜ້າລັດຖະບານ, ຊີ້ນຳ ແລະ ອຳນວຍຄວບຄຸມວຽກງານ ຂອງ ລັດຖະບານ, ຕາງໜ້າໃຫ້ລັດຖະບານຊີ້ນຳວຽກງານ ຂອງ ກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການອື່ນໆ ທີ່ຂຶ້ນກັບລັດຖະບານ, ຊີ້ນຳ ວຽກງານຂອງເຈົ້າແຂວງ ແລະ ເຈົ້າຄອງກຳແພງນະຄອນ.

ນາຍົກລັດຖະມົນຕີ ແຕ່ງຕັ້ງຮອງລັດຖະມົນຕີ, ຮອງປະທານຄະນະກຳມະການທຽບເທົ່າກະຊວງ, ຮອງເຈົ້າແຂວງ ແລະ ຮອງເຈົ້າຄອງກຳແພງນະຄອນ ແລະ ເຈົ້າເມືອງ.

ບັນດາຮອງນາຍົກລັດຖະມົນຕີ ເປັນຜູ້ຊ່ວຍວຽກນາຍົກລັດຖະມົນຕີ. ນາຍົກລັດຖະມົນຕີອາດຈະມອບໃຫ້ຮອງນາຍົກລັດຖະມົນຕີ ຜູ້ໃດຜູ້ໜຶ່ງ ເຮັດໜ້າທີ່ແທນຕົນໃນເວລາຕິດຂັດ.

**ມາດຕາ 61.** ສະພາແຫ່ງຊາດ ອາດຈະລົງມະຕິບໍ່ໄວ້ວາງໃຈ ລັດຖະບານ ຫລື ບຸກຄົນໃດໜຶ່ງໃນຄະນະລັດຖະບານ ຖ້າວ່າຄະນະປະຈຳສະພາແຫ່ງຊາດ ຫລື ມີໜຶ່ງສ່ວນສີ່ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ ຫາກສະເໜີບັນຫານີ້ຂຶ້ນ.

ໃນໄລຍະເວລາຊາວສີ່ຊົ່ວໂມງ ພາຍຫລັງທີ່ສະພາແຫ່ງຊາດໄດ້ລົງມະຕິບໍ່ໄວ້ວາງໃຈລັດຖະບານແລ້ວ, ປະທານປະເທດມີ

ສິດນຳເອົາບັນຫາບໍ່ໄວ້ວາງໃຈ ອອກໃຫ້ສະພາແຫ່ງຊາດພິຈາລະນາຄືນໃໝ່. ການພິຈາລະນາເທື່ອທີສອງຕ້ອງຫ່າງຈາກການພິຈາລະນາເທື່ອທີ່ໜຶ່ງ ສີ່ສິບແປດຊົ່ວໂມງ. ຖ້າວ່າໃນການລົງມະຕິເທື່ອໃໝ່ ລັດຖະບານຫາກຍັງບໍ່ໄດ້ຮັບຄວາມໄວ້ ວາງໃຈອີກແລ້ວກໍ່ຕ້ອງລາອອກ.

## ໗
## ໝວດທີ VII
## ການປົກຄອງທ້ອງຖິ່ນ

**ມາດຕາ 62.** ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວມີແຂວງ, ກຳແພງນະຄອນ, ເມືອງ ແລະ ບ້ານ.

ແຂວງ ແລະ ກຳແພງນະຄອນມີເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ, ເມືອງມີເຈົ້າເມືອງ, ບ້ານມີນາຍບ້ານ. ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ມີຮອງເຈົ້າແຂວງ, ຮອງເຈົ້າຄອງກຳແພງນະຄອນ, ເຈົ້າເມືອງມີຮອງເຈົ້າເມືອງເປັນຜູ້ຊ່ວຍວຽກ, ນາຍບ້ານຢູ່ໃນບ້ານທີ່ມີປະຊາຊົນຫລາຍ ກໍ່ມີຮອງນາຍບ້ານເປັນຜູ້ຊ່ວຍວຽກ.

**ມາດຕາ 63.** ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ, ເຈົ້າເມືອງມີສິດ ແລະ ໜ້າທີ່ດັ່ງນີ້ :

1. ຮັບປະກັນການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ຈັດຕັ້ງປະຕິບັດທຸກມະຕິຄຳສັ່ງ ທີ່ຂັ້ນເທິງວາງອອກຢ່າງເຂັ້ມງວດ ;

2. ຊີ້ນຳ ແລະ ກວດກາການເຄື່ອນໄຫວຂອງທຸກຂະແໜງການ, ທຸກຂັ້ນທີ່ຂຶ້ນກັບຂອບເຂດຮັບຜິດຊອບຂອງຕົນ;

3. ງົດການປະຕິບັດ ຫລື ລົບລ້າງຂໍ້ຕົກລົງຂອງທຸກຂະແໜງການທີ່ຢູ່ຂັ້ນຂອງຕົນ ຫລື ຂັ້ນລຸ່ມທີ່ຂັດກັບລະບຽບກົດໝາຍ;

4. ພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍ້ຕໍ່ວ່າ ແລະ ຂໍ້ສະເໜີ ຂອງປະຊາຊົນຢູ່ໃນຂອບເຂດສິດອຳນາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 64.** ນາຍບ້ານມີຄວາມຮັບຜິດຊອບຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ມະຕິຄຳສັ່ງຂອງລັດ, ປົກປັກຮັກສາ ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ, ພັດທະນາບ້ານໃຫ້ມີຄວາມໜັກແໜ້ນໃນທຸກດ້ານ.

## ດ
## ໝວດທີ VIII
## ອົງການຕຸລາການ

### ກ. ສານປະຊາຊົນ

**ມາດຕາ 65.** ສານປະຊາຊົນ ແມ່ນອົງການພິພາກສາ

ຂອງລັດ ຊຶ່ງປະກອບດ້ວຍສານປະຊາຊົນສູງສຸດ, ສານປະຊາຊົນແຂວງ, ກຳແພງນະຄອນ, ສານປະຊາຊົນເມືອງ ແລະ ສານທະຫານ.

**ມາດຕາ 66.** ສານປະຊາຊົນສູງສຸດ ແມ່ນອົງການພິພາກສາສູງສຸດຂອງລັດ.

ສານປະຊາຊົນສູງສຸດ ກວດກາຄຳຕັດສິນຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ.

**ມາດຕາ 67.** ຮອງປະທານສານປະຊາຊົນສູງສຸດ ແລະ ບັນດາຜູ້ພິພາກສາ ຂອງສານປະຊາຊົນທຸກຂັ້ນ ແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງ.

**ມາດຕາ 68.** ສານປະຊາຊົນພິຈາລະນາ ຕັດສິນເປັນໝູ່ຄະນະ. ໃນເວລາພິຈາລະນາຕັດສິນ ຜູ້ພິພາກສາຕ້ອງເປັນເອກະລາດ ແລະ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 69.** ການໄຕ່ສວນຄະດີ ໃນທີ່ກອງປະຊຸມສານຕ້ອງດຳເນີນຢ່າງເປີດເຜີຍ, ເວັ້ນເສັຽແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ. ຜູ້ຖືກຫາ ມີສິດຕໍ່ສູ້ຄະດີທີ່ຕົນຖືກກ່າວຟ້ອງ, ຄະນະທະນາຍຄວາມ ມີສິດຊ່ວຍເຫລືອ ທາງດ້ານກົດໝາຍແກ່ຜູ້ຖືກຫາ.

**ມາດຕາ 70.** ຜູ້ຕາງໜ້າບັນດາອົງການຈັດຕັ້ງ ສັງຄົມ

ມີສິດເຂົ້າຮ່ວມໃນການດຳເນີນຄະດີ ຢູ່ສານຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ .

**ມາດຕາ 71.** ຄຳຕັດສິນຂອງສານປະຊາຊົນທີ່ມີຜົນສັກສິດ ທາງດ້ານກົດໝາຍແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ ; ບັນດາບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ.

## ຂ. ອົງການໄອຍະການປະຊາຊົນ

**ມາດຕາ 72.** ອົງການໄອຍະການປະຊາຊົນ ປະກອບດ້ວຍ ອົງການອະທິໄອຍະການປະຊາຊົນ, ອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເມືອງ ແລະ ອົງການໄອຍະການ ທະຫານ.

ອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້ :

1. ກວດກາ ການເຄົາລົບລະບຽບກົດໝາຍ ຢ່າງຖືກຕ້ອງ ແລະ ເປັນເອກະພາບຢູ່ໃນທຸກກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ລັດຖະກອນ ແລະ ພົນລະເມືອງ .
2. ປະຕິບັດສິດກ່າວຟ້ອງ.

ມາດຕາ 73. ອະທິໄອຍະການປະຊາຊົນສູງສຸດ ນໍາພາການເຄື່ອນໄຫວຂອງອົງການໄອຍະການປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ຮອງອະທິໄອຍະການປະຊາຊົນ ແມ່ນຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຫລື ປົດຕໍາແໜ່ງ.

ໄອຍະການປະຊາຊົນ, ຮອງໄອຍະການ ປະຊາຊົນແຂວງ, ກໍາແພງນະຄອນ, ເມືອງ ແລະ ໄອຍະການທະຫານ ແມ່ນອະທິໄອຍະການປະຊາຊົນເປັນຜູ້ແຕ່ງຕັ້ງ ຫລື ປົດຕໍາແໜ່ງ.

ມາດຕາ 74. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ອົງການໄອຍະການປະຊາຊົນ ມີແຕ່ປະຕິບັດຕາມກົດໝາຍ ແລະ ຄໍາສັ່ງຂອງອະທິໄອຍະການເທົ່ານັ້ນ.

## ໝວດ ທີ IX

## ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ ແລະ ນະຄອນຫລວງ.

ມາດຕາ 75. ພາສາ ແລະ ອັກສອນລາວເປັນພາສາ ແລະ ອັກສອນທີ່ໃຊ້ເປັນທາງການ.

**ມາດຕາ 76.** ເຄື່ອງໝາຍຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຮູບວົງມົນ ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວ ແລະ ໂບສີແດງຂຽນອັກສອນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ, ສອງຂ້າງອ້ອມດ້ວຍຮວງເຂົ້າສຸກ ເປັນຮູບເຟື້ອງພະຈັນ ແລະ ໂບສີແດງຂຽນອັກສອນ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ; ລະຫວ່າງກາງຂອງສອງປາຍຮວງເຂົ້າມີຮູບທາດຫລວງ, ຢູ່ກາງຮູບວົງມົນມີທົນທາງ, ທົ່ງນາ, ປ່າໄມ້ ແລະ ເຂື່ອນໄຟຟ້ານ້ຳຕົກ.

**ມາດຕາ 77.** ທຸງຊາດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນທຸງພື້ນສີຄາມ, ແຂບແດງ ແລະ ວົງເດືອນສີຂາວ. ລວງກວ້າງຂອງທຸງເທົ່າສອງສ່ວນສາມ ຂອງລວງຍາວ, ແຂບແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງແຂບສີຄາມ ແລະ ວົງເດືອນສີຂາວ ກວ້າງເທົ່າກັບສີ່ສ່ວນຫ້າຂອງແຂບສີຄາມ.

**ມາດຕາ 78.** ເພງຊາດຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນເພງທີ່ມີຊື່ວ່າເພງຊາດລາວ.

**ມາດຕາ 79.** ນະຄອນຫລວງຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນນະຄອນວຽງຈັນ.

ໆ

## ໝວດ ທີ X

# ບົດບັນຍັດສຸດທ້າຍ

**ມາດຕາ 80.** ມີແຕ່ກອງປະຊຸມສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເທົ່ານັ້ນ ຈຶ່ງມີສິດປັ່ງປແປງລັດຖະທໍາມະນູນ.

ໃນການປັ່ງປແປງລັດຖະທໍາມະນູນ ຕ້ອງມີສະມາຊິກສະພາແຫ່ງຊາດຢ່າງໜ້ອຍສອງສ່ວນສາມຂອງຈໍານວນສະມາຊິກທັງໝົດ ເປັນຜູ້ລົງຄະແນນສຽງເຫັນດີ.